# ມັນຊິຕາຍອີຫຼີໃດ

ຫຼັງຈາກຍຶດອຳນາດການປົກຄອງທົ່ວປະເທດ ແລະ ສ້າງຕັ້ງສາທາລະນະລັດ ຮຽບຮ້ອຍແລ້ວ ໃນເມື່ອເຫັນວ່າ ສະພາບການທົ່ວໄປຢູ່ໃນຄວາມປົກຕິດີ ສະຫາຍ ໄກສອນ ພົມວິຫານ ເລຂາທິການໃຫຍ່ທີ່ສຸດ ຂອງພັກປະຊາຊົນ ປະຕິວັດລາວ ມັກຈະອອກທ່ຽວຢ້ຽມຢາມສາມະຊິກພັກທີ່ເຂດປົດປ່ອຍເກົ່າເປັນປົກຕິ ⭑

ດັ່ງນັ້ນ ໃນມື້ວັນທີ 23 ເດືອນກຸມພາ 1976 ສະຫາຍ ໄກສອນ ໄດ້ເດີນທາງຈາກວຽງຈັນໄປຍັງເມືອງວຽງໄຊ ໂດຍເຄື່ອງບິນ ຍັກ 40 ຂອງສາຍການບິນໂຊວຽຕ ອາເອໂຣຟະລົຕ ເພື່ອຢ້ຽມຢາມສາມະຊິກພັກຢູ່ທີ່ນັ້ນ ⭑

ຕາມທາງໄປ ເມື່ອເຄື່ອງບິນມຸ້ງໜ້າເຂົ້າສູ່ເຂດເມືອງວຽງໄຊໃກ້ຈະຮອດສນາມບິນ ຈັກອາຍພົ່ນນຶ່ງເຄື່ອງຕິດຂັດ ເປັນເຫດໃຫ້ເຄື່ອງບິນຕົກມຸ້ງໜ້າລົງສູ່ດິນຢ່າງໄວ ໃນເວລາທີ່ເຄື່ອງບິນເກີດມີຄວາມສັບສົນຂື້ນ ນາຍທະຫານຄົນນຶ່ງທີ່ ຕິດຕາມໄປ ຮ້ອງບອກວ່າ : ເອົາຈ້ອງ ສະຫາຍ ! ຕິດຈ້ອງແລ້ວໂດດອອກ ! ໄກສອນປະຕິບັດຕາມ ແຕ່ວ່າ ໂຊກຍັງບໍ່ ເຂົ້າຂ້າງ ເມື່ອໂດດອອກແລ້ວ ບັງເອີນຈ້ອງບໍ່ພື ດິ່ງລົງດິນວູດໆ ⭑ ເມື່ອຕົກຜ່າເມກລົງມາຍ່ານນຶ່ງ ພະຍາແຖນ ຫຼຽວ ເຫັນ ເພິ່ນໄດ້ເອີ້ນໃສ່ວ່າ : ບັກນ້ອຍເອີຍ ຄັນຢາກໃຫ້ຈ້ອງພື ມຶງຕ້ອງຮ້ອງແຮງໆວ່າ : **ຈັກພັດ ອະເມຣິກາ ຈົ່ງຈະເຣີນ !**

ສະຫາຍໄກສອນເກີດໜັກໃຈເຕັມທີ ຄິດໃນໃຈວ່າ ຊິເວົ້າໄດ້ຈັ່ງໃດ ມັນຜິດນະໂຍບາຍຂອງພັກ ! ຄິດຢູ່ຄາວນຶ່ງ ເລີຍ ຕັດສິນໃຈ ບໍ່ຕາຍດີກວ່າເວີຍ ຈຶ່ງໄດ້ຮ້ອງຂື້ນຢ່າງແຮງ ຕາມທີ່ພະຍາແຖນບອກ ⭑ ວ່າແລ້ວ ຈ້ອງກໍພືອອກທັນທີ ພ້ອມ ກັບຕົກຮອດດິນຢ່າງປອດພັຍຕໍ່ໜ້າປະຊາຊົນຈຳນວນຫຼວງຫຼາຍທີ່ຄອຍຕ້ອນຮັບຢູ່ທີ່ນັ້ນ ⭑ ສາມະຊິກພັກສະຫາຍນຶ່ງໄດ້ ຫ້ວງວ່າ ສະຫາຍໄກສອນ ສັ່ງມາເວົ້າໂລເລແທ້ ຕ້ອງໄດ້ໄປສັມນາຍາວນານກ່ອນໃດ໋ !

ໂອຍ ມັນຊິຕາຍອີຫຼີນີ້ໝາ !

**ໂດຍ ນ້ຳຕົກຕາດຫຼີ່ຜີ ⭑**